# ການຕໍ່ໃຫມ່ໃນການຄຸ້ມກັນ **Apple Health** ຂອງທ່ານ

Washington Apple Health

ການຄຸ້ມກັນ Apple Health (Medicaid) ຕ້ອງໄດ້ຖືກຕໍ່ໃຫມ່ແຕ່ລະປີເພື່ອຈະຮັກສາການຄຸ້ມກັນສຸຂະພາບຕໍ່ໄປ. ທ່ານກໍາລັງໄດ້ຮັບໃບປິວໃບນີ້ຍ້ອນວ່າທ່ານຕ້ອງໄດ້ເຮັດການກະທໍາເພື່ອຈະຕໍ່ການຄຸ້ມກັນໃຫມ່ສໍາລັບຕົວທ່ານເອງ ຫລື ຄົນໃດຄົນນຶ່ງຢູ່ໃນຄອບຄົວຂອງທ່ານ. ທ່ານອາດຈະເຮັດບໍ່ທັນຕາມກໍານົດຕາຍໂຕກໍໄດ້ອີກຄືກັນ.

## ທ່ານຈະຕໍ່ການຄຸ້ມກັນໃຫມ່ໄດ້ຢ່າງໃດ

ຈົ່ງໃຊ້ນຶ່ງຂອງທາງເລືອກຕໍ່ໃຫມ່ຕໍ່ລົງໄປນີ້:

### ທາງອອນລາຍນ໌ໄດ້ທີ່ **www.wahealthplanfinder.org**

- ຖ້າຫາກວ່າທ່ານມີບັນຊີ Washington Healthplanfinder ຢູ່, ລອກອິນ ແລະ ເລືອກເອົາ "Update My Application and Renew Coverage" ພາຍໃຕ້ລິງຄ໌ໄວໆ
- ຖ້າຫາກວ່າທ່ານບໍ່ມີບັນຊີ Healthplanfinder, ບີບໃສ່"Apply Now", ຂຽນລາຍຣະອຽດຂອງທ່ານເຂົ້າໃສ່ ແລະ ເລືອກເອົາ "Update My Application and Renew Coverage" ພາຍໃຕ້ລິງຄ໌ໄວໆ

### ການໃຊ້ໂມໂບແອບຂອງ **WAPlanfinder**

- ຖ້າຫາກວ່າທ່ານມີບັນຊີ Healthplanfinder ຫລື ຕ້ອງການຢາກເຮັດບັນຊີນຶ່ງຂຶ້ນມາ, ຈົ່ງໃຊ້ແອບ໌ຂອງ WAPlanfinder ເພື່ອຈະຕໍ່ການຄຸ້ມກັນໃຫມ່ອີກ.
- ແອບ໌ຈະມີໄວ້ໃຫ້ຢູ່ຮ້ານ App Store ແລະ Google Play

### ໂທຫາສູນກາງອູ້ມຊູຄົນບໍຣິໂພກຂອງ **Healthplanfinder** ໄດ້ທີ່ເລກ**1-855-923-4633**

### ໃຊ້ເອກສານການຕໍ່ໃຫມ່ທີ່ໄດ້ຮັບທາງໄປສະນີ, ເຊັນຊື່ ແລະ ສົ່ງກັບຄືນມາໂດຍໃຊ້ນຶ່ງຂອງທາງເລືອກເຫລົ່ານີ້:

- **ໄປສະນີ:** PO Box 946, Olympia, WA 98507
- **ແຟກ໌:** 1-855-867-4467
- **CSO**: ປ່ອນໄວ້ຢູ່ຕາມຫ້ອງການບໍຣິການຊຸມນຸມຊົນ DSHS ທ້ອງຖິ່ນຂອງທ່ານໃສ່ໃນບອກ໌ປ່ອນເອກສານຢູ່ຫ້ອງຮັບແຂກ: **www.dshs.wa.gov/office-locations**

ເມື່ອເວລາການຕໍ່ໃຫມ່ຂອງທ່ານໄດ້ຖືກດໍາເນີນການແລ້ວ, ທ່ານຈະຖືກສົ່ງໃບແຈ້ງການໄປຫາເພື່ອຈະແຈ້ງໃຫ້ທ່ານຮູ້ຈັກວ່າທ່ານ ຫລື ສະມາຊິກຄອບຄົວຂອງທ່ານຍັງມີສິດໄດ້ຮັບການຄຸ້ມກັນຢູ່ ຫລື ບໍ່. ທ່ານຕ້ອງເຮັດການຕໍ່ໃຫມ່ຂອງທ່ານໃຫ້ແລ້ວເພື່ອຈະພິຈາຣະນາເບິ່ງວ່າທ່ານມີສິດໄດ້ຮັບການຄຸ້ມກັນສຸຂະພາບຕໍ່ໄປ ຫລື ບໍ່.

### ກາຍກໍານົດເວລາຕາຍໂຕບໍ່?

ຖ້າຫາກວ່າທ່ານກາຍເກີນເວລາກໍານົດເວລາຕາຍໂຕສໍາລັບການຕໍ່ໃຫມ່ ແລະ ທ່ານ ຫລື ສະມາຊິກຄອບຄົວຂອງທ່ານສູນເສັຽການຄຸ້ມກັນ Apple Health, ທ່ານມີເວລາ 90 ວັນທີ່ຈະເຮັດການຕໍ່ໃຫມ່ໃຫ້ແລ້ວໂດຍການໃຊ້ນຶ່ງຂອງທາງເລືອກຂອງການຕໍ່ໃຫມ່. ຖ້າຫາກວ່າທ່ານມີເງື່ອນໄຂໄດ້ຮັບ, ການຄຸ້ມກັນຂອງທ່ານຈະດໍາເນີນຕໍ່ໄປຈາກວັນທີທີ່ທ່ານສູນເສັຽການຄຸ້ມກັນໂດຍປາສຈາກຊ່ອງວ່າງ.

ຖ້າຫາກວ່າທ່ານບໍ່ມີສິດໄດ້ຮັບ Apple Health, ທ່ານອາດຈະມີສິດໄດ້ຮັບການຄຸ້ມກັນແນວອື່ນຜ່ານໂຄງການ Qualified Health Plan, ດ້ວຍຄວາມຊ່ວຍເຫລືອ ຫລື ປາສຈາກຄວາມຊ່ວຍເຫລືອທີ່ຈະຈ່າຍຄ່າທໍານຽມ. ທ່ານຕ້ອງໄດ້ເຮັດການຕໍ່ໃຫມ່ຂອງທ່ານໃຫ້ແລ້ວເພື່ອຈະເບິ່ງວ່າທ່ານມີສິດໄດ້ຮັບນຶ່ງຂອງໂຄງການເຫລົ່ານີ້ ຫລື ບໍ່.

### ມີຄໍາຖາມບໍ່?

ຖ້າຫາກວ່າທ່ານມີຄໍາຖາມແນວໃດກ່ຽວກັບການຄຸ້ມກັນ Apple Health, ກະຣຸນາຕິດຕໍ່ຫາສູນກາງບໍຣິການປະຊາສັມພັນການຊ່ວຍເຫລືອພະຍາບານຂອງ Health Care Authority:

- **ໂທຣະສັບ:** 1-800-562-3022
- **ໃບຟອມແວບ໌ປອດພັຍ:** **https://fortress.wa.gov/hca/p1contactus/**



Washington State Health Care Authority